ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

*The Promotion of Family Health Association of Lao PDR*
*House No. 449 Unit 36, Phonkheng Village,*
*Saysettha District, Vientiane Capital, LAO PDR*
*Tel: 856 21 413261*
*Email: pfha@outlook.com/ Website: www.pfhalaos.org*

# ປະກາດຮັບພະນັກງານ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ) ເປັນອົງການຈັດຕັ້ງທາງສັງຄົມທີ່ບໍ່ຫວັງຜົນກຳໄລ (NPA). ເພື່ອຊ່ວຍເຫຼືອປະຊາຊົນທີ່ເປັນກຸ່ມສ່ຽງ ແລະ ກຸ່ມດ້ອຍໂອກາດໃຫ້ເຂົ້າເຖິງຂໍ້ມູນຂ່າວສານທາງດ້ານສຸຂະພາບທີ່ຖືກຕ້ອງແລະໄດ້ເຂົ້າຮັບການບໍລິການດ້ານສຸຂະພາບຢ່າງເທົ່າທຽມແລະຮອບດ້ານ. ສສສຄໄດ້ຮັບການສະໜັບສະໜູນເປັນຫລັກດ້ານວິຊາການ ແລະ ທຶນຮອນແມ່ນມາຈາກ ສະຫະພັນວາງແຜນຄອບຄົວສາກົນ (International Planned Parenthood Federation ຫຼື IPPF) ທີມີຫ້ອງການພາກພື້ນຢູ່ປະ ເທດມາເລເຊຍ ນັບຕັ້ງແຕ່ປີ 2004 ເປັນຕົ້ນມາ. ປະຈຸບັນ ສສສຄ ມີສະມາຊິກຫຼາຍກວ່າ 50ທ່ານທີ່ມີປະສົບການ, ຄວາມຊ່ຽວຊານແລະປະຫວັດການເຮັດວຽກຫຼາກຫຼາຍທີ່ແຕກຕ່າງກັນ. ຜົນໄດ້ຮັບ/ຜົນສຳ ເລັດທີ່ສຳຄັນທີ່ສຸດຂອງ ສສສຄ ແມ່ນການປະກອບ ສ່ວນສ້າງຂີດຄວາມສາມາດຂອງພະນັກງານສາທາລະນະສຸກ, ຍົກສູງຄຸນນະພາບການເບິ່ງແຍງ, ເຮັດໃຫ້ກຸ່ມເປົ້າໝາຍ ຢູ່ເຂດຫ່າງໄກສອກຫຼີກເຂົ້າເຖິງການບໍລິການທາງດ້ານສຸຂະພາບຈະເລີນພັນ, ການວາງແຜນຄອບຄົວແລະຂໍ້ມູນຂ່າວ ສານກ່ຽວກັບສຸຂະພາບຈະເລີນພັນ.

ສສສຄ, ມີຂົງເຂດ ໃນການເຮັດວຽກ ໃນທົ່ວປະເທດ ແລະ ທຸກລະດັບ, ໂດຍສະເພາະໃນລະດັບທ້ອງຖິ່ນ. ປະຈຸບັນນີ້ ສສສຄ ມີໂຄງການຢູ່ບາງແຂວງແລະບາງເມືອງ ເຊັ່ນ: ໂຄງການແມ່ປອດໄພ, ໂຄງການ ຮ່າງກາຍຂອງຂ້ອຍອະນາຄົດຂອງຂ້ອຍ, ໂຄງການ“ ປັບປຸງການເຂົ້າເຖິງການບໍລິການດ້ານສາທາລະນະສຸກຂອງແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ, ໂຄງການເຊື່ອມສານແມ່ປອດໄພແລະຕອບສະໜອງ.

ດັ່ງນັ້ນ, ໂຄງການ“ **, ໂຄງການເຊື່ອມສານແມ່ປອດໄພ ແລະ ຕອບສະໜອງ**, ໂຄງການດັ່ງກ່າວນີ້ເລີ່ມຈັດຕັ້ງແຕ່ ປີ ***2024-2028***

.

ດັ່ງນັ້ນສະມະຄົມສົ່ງເສີມສຸຂະພາບຄອບຄົວ(ສສສຄ) ຕ້ອງການເພືອນຮ່ວມງານໃນຕຳແຫນ່ງ:

- **ພະນັກງານ ວິຊາການຜູ້ປະສານງານຂັ້ນເມືອງ “Respond”(1 ຕຳແໜ່ງ )**

**(ປະຈຳຢູ່ ຫ້ອງການສສສຄ ແຂວງຫຼວງນ້ຳທາ)**

**ພາລະບົດບາດແລະຄວາມຮັບຜິດຊອບ**

ຕຳແໜ່ງງານນີ້ ມີພາລະບົດບາດ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານຈັດການໂຄງການຢູ່ໃນລະດັບຂັ້ນເມືອງ ພ້ອມທັງນຳພາທີມງານແລະຄູ່ວມງານຈັດຕັ້ງປະຕິບັດແຕ່ລະກິດຈະກຳໃຫ້ປະສົບຜົນສຳເລັດຕາມຈຸດປະສົງ ແລະ ເປົ້າໝາຍທີ່ທາງໂຄງການວາງແຜນໄວ້. ມີພາລະບົດບາດຫລັກໃນການປະສານງານແລະເຮັດວຽກຮ່ວມກັບຫົວໜ້າສາຍງານຂອງຕົນ ລວມທັງຄູ່ຮ່ວມງານທຸກພາກສ່ວນທີ່ກ່ຽວຂ້ອງໃນຂັ້ນເມືອງ ໃຫ້ການສະໜັບສະໜູແນະນຳແລະຊ່ວຍເຫລືອຄູ່ຮ່ວມງານ ກ່ຽວກັບວິທີການຂຶ້ນແຜນ ຂໍອະນຸມັດຈັດຕັ້ງປະຕິບັດກິດຈະກຳ, ຂັ້ນຕອນການຈັດຕັ້ງປະຕິບັດກິດຈະກຳ, ການນຳໃຊ້ເຄືອ່ງມືຂອງໂຄງການ, ວິທີການຕິດຕາມເວລາຈັດຕັ້ງປະຕິບັດກິດຈະກຳແລະການເຮັດບົດລາຍງານກິດຈະກຳ ເພື່ອໃຫ້ຮັບປະກັນວ່າທຸກຂັ້ນຕອນການດຳເນີນກິດຈະກຳແມ່ນເຂົ້າເຖິງກຸ່ມເປົ້າໝາຍ ມີຂໍ້ມູນອ້າງອີງ ແລະຖືກຕ້ອງຕາມລະບຽບແລະນະໂນບາຍຂອງ ສສສຄ ແລະໂຄງການ. ລົງຕິດຕາມຊຸກຍູ້ຄູ່ຮ່ວມງານ ແລະ ເຂົ້າຮ່ວມການຈັດຕັ້ງປະບັດກິດຈະກຳຂອງໂຄງການໃນຂັ້ນຊຸມຊົນ, ຂັ້ນເມືອງ ສະຫລຸບລາຍງານຜົນການຕິດຕາມປະເມີນກິດຈະກຳ, ພັດທະນາສ້າງຄວາມອາດສາມາດໃຫ້ກັບ

ຕົນເອງ, ນອກຈາກນີ້ ຍັງມີພາລະບົດບາດກ່ຽວກັບວຽກງານສື່ສານ Mediaເຊັ່ນ: ຂຽນບົດເລື່ອງກໍລະນີສຶກສາປະກອບຮູບພາບ ກ່ຽວກັບການປ່ຽນແປງພຶດຕິກຳ, ການປ່ຽນແຜງທາງດ້ານແນວຄິດ ຂອງຄົນເຈັບ ຂອງຄູ່ຮ່ວມງານ, ຖ່າຍຮູບ ແລະ ວີດີໂອສັ້ນທຸກຄັ້ງ ໃນເວລາເຮັດກິດຈະກຳ.

**ໜ້າທີ່ຫຼັກ**

- ເຮັດວຽກຢ່າງໃກ້ຊິດແລະຕໍ່ເນື່ອງຮ່ວມກັບຫົວສາຍງານຂອງຕົນ ກ່ຽວກັບແຜນງານຂອງໂຄງການ, ແຜນງົບປະມານ ແລະ ແຜນຕົວຊີ້ວັດພ້ອມນິຍາມ ແຍກອອກ ເປັນປີ, ໄຕມາດ, ເດືອນ ແລະ ເປັນລາຍກິດຈະກຳ.
- ວາງແຜນດຳເນີນໂຄງການໃນຂັ້ນເມືອງເປັນປີ, ໄຕມາດ, ເດືອນ ແລະ ລາຍກກິດຈະກຳເຊັ່ນ: ແຜນວຽກຂອງໂຄງການ, ແຜນຕົວຊີວັດ ແລະ ແແຜນງົບປະມານ.
- ອຳນວຍຄວາມສະດວກໃນການນຳສະເໜີ ແນະນຳແຜນງານໂຄງການ ແຜນວຽກຂອງໂຄງການ, ແຜນຕົວຊີວັດ ແລະ ແແຜນງົບປະມານ ເປັນປີ ໄຕມາດ ກິດຈະກຳ ໃຫ້ຄູ່ຮ່ວມງານເພື່ອໃຫ້ຮັບປະກັນວ່າຄູ່ຮ່ວມງານແຕ່ລະພາກສ່ວນຢູ່ຂັ້ນເມືອງຮັບຮູ້ ແລະເຂົ້າໃຈແຜນດຳເນີນກິດຈະກຳຂອງໂຄງການ ທີ່ຕິດພັນກັບພາລະບົບບາດຂອງເຂົາເຈົ້າ.
- ເຮັດວຽກຢ່າງໃກ້ຊິດແລະຕໍ່ເນື່ອງກັບຄູ່ຮ່ວມງງານຂັ້ນເມືອງພ້ອມໃຫ້ການສະໜັບສະໜູນແລະອຳນວຍຄວາມສະດວກຕໍ່ຫ້ອງການສາທາເມືອງ,ຫ້ອງການສະຫະພັນແມ່ຍິງເມືອງ ຫ້ອງການຍຸຕິທຳເມືອງ, ກ່ຽວກັບແຜນການຈັດ ຕັ້ງປະຕິບັດໂຄງການເຊັ່ນ: ຂັ້ນຕອນການຂື້ນແຜນກິດຈະກຳ, ວິທີການຈັດຕັ້ງປະຕິບັດແຕ່ລະກິດຈະກຳ, ການນຳໃຊ້ເຄື່ອງມືແບບຟອມຂອງໂຄງການ ແລະ ວິທີການການລາຍຜົນສຳເລັດຂອງກິດຈະກຳ.
- ລົງຕິດຕາມຊຸກຍູ້ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການຢູ່ໃນ ຂັ້ນຊຸມຊົນ, ຂັ້ນເມືອງ ພ້ອມສັງລວມງາຍງານຜົນການລົງຕິດຕາມຊຸກຍູ້ທຸກຄັ້ງໃຫ້ກັບຫົວໜ້າສາຍງານແລະຄູ່ຮ່ວມງານ.
- ສະຫລຸບສັງລວມລາຍງານຜົນການຈັດຕັ້ງປະຕິບັດໂຄງການ ລວມທັງງົບປະມານ ຕົວຊີ້ວັດ ເປັນລາຍກິດຈະກຳ, ໄຕມາດ, ແລະ ປີສົ່ງໃຫ້ຫົວໜ້າສາຍງານ ແລະ ຄູ່ຮ່ວມງານຂັ້ນເມືອງ.
- ອຳນວຍຄວາມສະດວກໃຫ້ກັບຜູ້ປະສານງານໂຄງການ, ວິຊາການສສສດ, ຄູ່ຮ່ງານຂັ້ນສູນກາງ, ຄູຝຶກ, ຊ່ຽວຊາ ໃນການລົງຕິດຕາມຊຸກຍູ້, ດ້ານວິຊາການ, ຫລັງການອົບຮົມ, ແລະ ວຽກງານອື່ນທີ່ກ່ຽວຂ້ອງ. ພ້ອມລາຍງານຜົນຂອງການລົງຕິດຕາມທຸກຄັ້ງໃຫ້ກັບຫົວໜ້າສາຍງານແລະຄູ່ຮ່ວມງານ.
- ຂື້ນແຜນຂໍຈັດຕັ້ງປະຕິບັດກິດຈະກຳຕາມແຜນທີ່ຕົນເອງຮັບຜິດຊອບ, ຕາມການມອບໝາຍຂອງຫົວໜ້າສາຍງານ ຫລື ແຜນງານຂອງໂຄງການພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດກິດຈະກຳທຸກຄັ້ງ.
- ເກັບມ້ຽນເອກະສານກ່ຽວກັບການຈັດຕັ້ງປະຕິບັດຂອງໂຄງການໃຫ້ເປັນລະບຽບເຂົ້າເຖີງງ່າຍລວມທັງເປັນຟາຍ Software, Hardware, ແລະ ເກັບມ້ຽນໃນ Google Drive ເຊັ່ນ: ເອກະສານ ກ່ຽວກັບ ແຜນງານໂຄງການ, ແຜນງົບປະມານ, ແຜນຕົວຊີ້ວັດ ພ້ອມທັງລາຍງານ ທີ່ແຍກອອກເປັນ ເປັນປີ, ໄຕມາດ ແລະ ລາຍກິດຈະກຳ.
- ທຸກໆໄຕມາດ ຂຽນບົດເລື່ອງກໍລະນີສຶກສາປະກອບຮູບພາບເຈົ້າຂອງບົດເລື່ອງ ຂອງຜູ້ທີ່ຢູ່ໃນ ຊຸມຊົນ ຫລື ຄົນເຈັບ ກ່ຽວກັບການປ່ຽນແປງພຶດຕິກຳ, ການປ່ຽນແປງທາງດ້ານແນວຄິດ, ທີ່ເກີດຂື້ນຍ້ອນຜົນການຈັດຕັ້ງປະຕິບັດກິດຈະ ກຳຂອງໂຄງການ.
- ຂຽນຂ່າວທຸກຄັ້ງແລະປະກອບຮູບພາບກ່ຽວກັບກິດຈະກຳທີ່ໄດ້ຈັດປະຕິບັດຢູ່ໃນຊຸມຊົນ, ສຸກສາລາ, ເມືອງ ແລ້ວສົ່ງໃຫ້ຫົວໜ້າສາຍງານ ແລະ ໜ່ວຍງານ Media ພ້ອມທັງຕິດຕາມຄຳຄິເຫັນຈາກຂ່າວ.
- ຕິດຕາມ, ໃຫ້ການສະໜັບສະໜູນແລະອຳນວຍຄວາມສະດວກໃນການຜະລິດສື່ໂຄສະນາຜ່ານທາງອອນລາຍ ໂດຍສະເພາະແມ່ນທາງຕິກຕ໊ອກ.

- **ການປະສານງານໂຄງການ**

- ປະສານງານຫລັກກັບຫົວໜ້າສາຍງານຂອງຕົນ, ໜ່ວຍງານຕິດຕາມປະເມີນໂຄງການ ແລະ ຄູ່ຮ່ວມງານຫ້ອງການສາທາເມືອງ, ຫ້ອງການສະຫະພັນແມ່ຍິງ ຫ້ອງການຍຸຕິທຳ ພ້ອມບັນດາຄູ່ຮ່ວມງານພາກສ່ວນທີ່ກ່ຽວຂ້ອງ.

*The Promotion of Family Health Association of Lao PDR*
*House No. 449 Unit 36, Phonkheng Village,*
*Saysettha District, Vientiane Capital, LAO PDR*
*Tel: 856 21 413261*
*Email: pfha@outlook.com/ Website: www.pfhalaos.org*

- ເປັນຕົວແທນຂອງ PFHA ເຂົ້າຮ່ວມກອງປະຊຸມພາຍໃນແລະພາຍໃນຕາມຄຳແນະນຳຂອງຫົວໜ້າວາຍງານແລະຂອງອົງກອນ ສສສຄ.
- ປະສານງານກັບພະນັກງານ PFHA ທີ່ກ່ຽວຂ້ອງທັງໝົດເພື່ອສະໜັບສະໜູນ ແລະ ຊ່ວຍເຫຼືອໂຄງການພາຍໃນ ອື່ນໆ.
- **ການສ້າງຄວາມອາດສາມາດ**
- ພັດທະນາຄວາມອາດສາມາດຂອງຕົນຢ່າງຕໍ່ເນື່ອງເຊັ່ນ: ການເປັນຜູ້ນຳ, ການຄຸ້ມຄອງບໍລິຫານໂຄງການ, ການປະສານງານ, ທັກສະການສື່ສານ, ວິຊາການ, ດ້ານການເປັນຄູຝຶກ, ດ້ານນິຕິກຳ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບສຸຂະພາບຈະເລີນພັນ ແລະ ສິທິທາງເພດ
- ເຂົ້າຮ່ວມຝຶກອົບຮົມເພື່ອພັດທະນາຄວາມສາມາດຂອງຕົນຕາມການມອບໝາຍຂອງຫົວໜ້າສາຍງານ ແລະ ຂອງອົງກອນ ສສສຄ.
- ພັດທະນາຄວາມອາດສາມາດຂອງຕົນໃນການນຳໃຊ້ ເທັກໂນໂລຊີເຊັ່ນ: AI, KOBO, Google sheet, Google form, DATA Analyze.
- **ເງື່ອນໄຂ**
- ເປັນພົນລະເມືອງລາວ
- ດ້ານການສຶກສາ ຈົບຊັ້ນສູງຂຶ້ນໄປ ສາຂາໃດກໍ່ໄດ້ ຖ້າຈົບທາງດ້ານແພດແລະກົດໝາຍຈະເປັນການດີ
- ມີປະສົບການໃນການເປັນຜູ້ຮັບຜິດຊອບໂຄງການ ຫລື ນຳພາຈັດຕັ້ງປະຕິບັດກິດຈະກຳຢ່າງນ້ອຍ 2ປີຂື້ນໄປ
- ດ້ານພາສາສາມາດສື່ສານພາສາອັງກິດລະດັບພື້ນຖານ, ຖ້າສື່ສານພາສາຊົນເຜົ່າໄດ້ຈະເປັນການດີ
- ດ້ານຄອມພິວເຕີສາມາດນຳໃຊ້ Word, Excel ແລະ Power Point.
- ມີປະສົບການແລະຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນແລະການວາງແຜນຄອບຄົວຢ່າງນ້ອຍ2ປີຂື້ນໄປ
- ມີປະສົບການແລະຄວາມຮູ້ກ່ຽວກັບຄວາມສະເໝີພາບຍິງຊາຍແລະການຕ້ານການໃຊ້ຄວາມຸນແຮງຢ່າງນ້ອຍ 2ປີຂື້ນໄປ
- ມີມະນຸດສຳພັນດີ, ມັກຮັກໃນວຽກງານພັດທະນາຊົນນະບົດເຂດຫ່າວໄກຊອກຫລີກ.
- ສາມາດເດີນທາງໄປເຂດພື້ນທີ່ຫ່າງໄກສອກຫລີກໄດ້

**ເງິນເດືອນ:** ສາມາດຕໍ່ລອງໄດ້ ອີງຕາມຄຸນສົມບັດ ແລະ ປະສົບການ

**ໃບສະໝັກ:** ສະມະຄົມສົ່ງເສີມສຸຂະພາບຄອບຄົວ ມຸ່ງໝັ້ນທີ່ຈະໃຫ້ໂອກາດ ຢ່າງສະເໝີພາບ, ເທົ່າທຽມ ແລະ ມີຄວາມຫຼາກຫຼາຍທາງດ້ານວັດທະນະທຳ. ຍິນດີຕ້ອນຮັບຜູ້ສະໝັກ ຈາກທຸກພາກສ່ວນ. ພວກເຮົາເຊັ່ງຂັດ ໃນນະໂຍບາຍການປົກປ້ອງສິດທິດເດັກ, ໄວໜຸ່ມ ແລະ ຜູ້ທີ່ມີຄວາມສ່ຽງ ຖ້າທ່ານຖືກຄັດເລືອກ. ທ່ານຈະຕ້ອງປະຕິບັດຕາມນະໂຍບາຍນີ້. ຜູ້ສະໝັກສາມາດຍື່ນຊີວະປະຫວັດ, ພ້ອມໃສ່ຊື່ຜູ້ຢັ້ງຢືນ 3 ທ່ານໃນໃບຊີວະປະຫວັດ, ແລະ ໃບສະໝັກວຽກ (ສຳລັບເອກະສານປະກອບອື່ນໆ ເຊັ່ນ: ໃບແຈ້ງໂທດ, ໃບກວດສຸຂະພາບ, .... ແມ່ນສາມາດຍື່ນເພີ່ມເຕີມຫລັງຈາກຖືກຄັດເລືອກ) ກຳນົດສົ່ງເອກະສານ ຕັ້ງແຕ່ວັນທີ **5 ມິຖຸນາ 2025** ເຖີງວັນທີ **12 ມິຖຸນາ 2025**

*ສະມາຄົ ມສົ່ງເສີມສຸຂະພາບຄອບຄົວ, ສປປ ລາວ*

*ເຮືອນເລກທີ 449 ໜ່ວຍ 36, ບ້ານ ໂພນເຄັງ ,*

*ໄຊເສດຖາ , ນະຄອນຫຼວງວຽງຈັນ, ສປປ ລາວ*

*ໂທ: 856 21 413261, ແຟັກ: 021 414918*

*ອີເມວ: pfha@outlook.com*